ຊຶມເຊີ

ລາງວັນດີເດັ່ນທີ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຮັບຈາກອາລະສານຊັ້ນນຳຈາກຕ່າງປະເທດ

ອາລະສານການທະນາຄານແລະການເງິນອາຊີ (Asian Banking and Finance Magazine) ມອບ 3 ລາງວັນດີເດັ່ນໃຫ້ແກ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນງານປະກາດລາງວັນ Asian Banking & Finance Awards 2019 ທີ່ຈັດຂຶ້ນຢູ່ທີ່ ປະເທດສິງກະໂປ, ໃນວັນທີ 18 ກໍລະກົດ 2019 ທີ່ຜ່ານມາ.



ທ່ານ ບົວວັນ ສົມມະວົງ, ຮອງຜູ້ອຳນວຍການໃຫຍ່ ທຄຕລ ຮ່ວມຮັບລາງວັນອັນຊົງກຽດດັ່ງກ່າວ
ພ້ອມດ້ວຍຄະນະຕາງໜ້າຂອງ ທຄຕລ ຈາກທ່ານ Tim Charlton,

ລາງວັນທີ່ ທຄຕລ ໄດ້ຮັບແມ່ນໄດ້ມາຈາກຂະແໜງທະນາຄານບໍລິການລູກຄ້າທົ່ວໄປ ຫຼື Retail Banking Awards ລາງວັນອັນຊົງກຽດທີ່ ທຄຕລ ໄດ້ຮັບໃນປີນີ້ປະກອບມີ 03 ລາງວັນຄື:

❶ ລາງວັນດີເດັ່ນດ້ານແນວຄິດລິເລີ່ມ ເພື່ອການເຂົ້າເຖິງບໍລິການດ້ານການເງິນຢ່າງທົ່ວເຖິງ ແຫ່ງປີ (ຫຼື FINANCIAL INCLUSION INITIATIVE OF THE YEAR – LAOS)

ລາງວັນດັ່ງກ່າວໄດ້ຈາກການສະເໜີ ບໍລິການເງິນດ່ວນຊຸມຊົນ (BCOME) ເຂົ້າຊິງລາງວັນ ເນື່ອງຈາກຜະລິດຕະພັນ BCOME ໃຫ້ ບໍລິການໂອນ-ຮັບເງິນພາຍໃນປະທດທີ່ງ່າຍທີ່ສຸດ, ມີຄວາມທັນສະໄໝ, ສະດວກ ແລະ ວ່ອງໄວ ດ້ວຍການໂອນ-ຮັບເງິນຜ່ານຕົວແທນ BCOME ທີ່ມີຢູ່ໃນແຕ່ລະຊຸມຊົນ. ການບໍລິການນີ້ຊ່ວຍໃຫ້ລູກຄ້າຜູ້ທີ່ອາໄສຢູ່ເຂດຊົນນະບົດ, ຫ່າງຈາກຕົວເມືອງ ຫຼື ຫ່າງຈາກຈຸດ ບໍລິການຂອງ ທຄຕລ ສາມາດໃຊ້ບໍລິການໂອນເງິນ-ຮັບເງິນໄດ້ ທັງໃນ ແລະ ນອກໂມງລັດຖະການ (ອີງຕາມເວລາເປີດ-ປິດຂອງຕົວແທນ). ບໍລິການເງິນດ່ວນຊຸມຊົນ BCOME ຍັງຊ່ວຍປະຢັດເວລາ ແລະ ຄ່າໃຊ້ຈ່າຍໃນການເດີນທາງຂອງລູກຄ້ານຳອີກ. ບໍລິການ BCOME ໄດ້ ເລີ່ມໃຫ້ບໍລິການ ໃນທ້າງປີ 2015, ເລີ່ມຈາກ 11 ຕົວແທນ, ການບໍລິການດັ່ງກ່າວແມ່ນໄດ້ຮັບການຕອບຮັບຈາກລູກຄ້າຢ່າງຫຼວງຫຼາຍ ເຮັດ ໃຫ້ຈຳນວນຕົວແທນເພີ່ມຂຶ້ນຢ່າງວ່ອງໄວ, ປະຈຸບັນ, ທົ່ວປະເທດມີຕົວແທນ BCOME ຫຼາຍກວ່າ 500 ຕົວແທນ. ຈາກການຕອບຮັບທີ່ ດີນີ້, ທຄຕລ ໄດ້ສືບຕໍ່ພັດທະນາເພີ່ມຄວາມສາມາດ ໃຫ້ BCOME ສາມາດໃຫ້ມີຜະລິດຕະພັນບໍລິການໄດ້ຫຼາກຫຼາຍຂຶ້ນຕື່ມ.

❷ ດີເດັ່ນດ້ານແນວຄວາມຄິດລິເລີ່ມໃນການໃຫ້ບໍລິການຜ່ານລະບົບມືຖື ແຫ່ງປີ
(ຫຼື MOBILE BANKING INITIATIVE OF THE YEAR – LAOS)

ລາງວັນດັ່ງກ່າວໄດ້ຈາກການສະເໜີຜະລິດຕະພັນ BCEL One (Function OnePay) ເຂົ້າຮ່ວມຊິງລາງວັນ ເນື່ອງຈາກເປັນ ບໍລິການທີ່ມີຄວາມທັນສະໄໝໃນການໃຫ້ບໍລິການທາງດ້ານການເງິນໃນຍຸກສັງຄົມດິຈິຕ້ອນ. OnePay ແມ່ນລະບົບການ ຊຳລະສະສາງ ຜ່ານລະຫັດ QR Code Payment, ທີ່ມີຄວາມສະດວກ ແລະ ຊ່ວຍໃນການຊຳລະສະສາງຄ່າສິນຄ້າ ແລະ ບໍລິການຜ່ານ BCEL One Application. ລູກຄ້າທີ່ນຳໃຊ້ BCEL One ສາມາດຊຳລະສະສາງ ດ້ວຍວິທີການງ່າຍໆ ໂດຍສະແກນ QR Code ຂອງຮ້ານ ຄ້າ ແລະ ສາມາດເຮັດບໍລິການຊຳລະໄດ້ທັນທີ. ບໍລິການ OnePay ຂອງ ທຄຕລ ຖືໄດ້ວ່າ ເປັນບໍລິການທີ່ທັນຍຸກ, ທັນສະໄໝ ແລະ ເປັນທີ່ຍອມຮັບຂອງສັງຄົມຢ່າງວ່ອງໄວ. ໃນເດືອນ 12/2017 ມີຈຳນວນຮ້ານຄ້າ ທີ່ເຂົ້າຮ່ວມພຽງ 438 ຮ້ານ, ຮອດທ້າຍເດືອນ 7/2019 ຈຳນວນຮ້ານເພີ້ມຂຶ້ນເປັນຫຼາຍກ່ວາ 11,000 ຮ້ານ.

❸ ລາງວັນໂຄງການຮັບຜິດຊອບ ແລະ ຊ່ວຍເຫຼືອສັງຄົມດີເດັ່ນ - ຫຼຽນເງິນ ແຫ່ງປີ
(ຫຼື CORPORATE SOCIAL RESPONSIBILITY PROGRAM OF THE YEAR LAOS – SILVER)

ລາງວັນດັ່ງກ່າວໄດ້ຈາກການສະເໜີຜະລິດຕະພັນ OneHeart ເຂົ້າຮ່ວມຊິງລາງວັນ ເນື່ອງຈາກຜະລິດຕະພັນ OneHeart ຂອງ ທຄຕລ ມີຄວາມໂດດເດັ່ນ, ກຳລັງເປັນທີ່ຍອມຮັບ ແລະ ໄດ້ຮັບການເຊື່ອຖືຈາກສັງຄົມ ວ່າເປັນຜະລິດຕະພັນທີ່ມີລະບົບການຈັດການ ບໍລິຈາກທີ່ທັນສະໄໝ, ໂປ່ງໃສ ແລະ ກວດສອບໄດ້. ຜະລິດຕະພັນ OneHeart ຊ່ວຍເຮັດໃຫ້ມີຊ່ອງທາງໃນການປະກອບສ່ວນຂອງ ລູກຄ້າ (ທັງພາຍໃນ ແລະ ຕ່າງປະເທດ) ທີ່ຢາກປະກອບສ່ວນຊ່ວຍເຫຼືອສັງຄົມ ໂດຍສະເພາະຜົນງານໂດດເດັ່ນ ຜ່ານມາ ແມ່ນໄດ້ຮັບ ບໍລິການໂຄງການຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມຢູ່ ແຂວງອັດຕະປື ທີ່ສ້າງຊື່ສຽງໃຫ້ ທຄຕລ ເປັນທີ່ຮູ້ຈັກດ້ານການປະກອບສ່ວນຊ່ວຍເຫຼືອ ສັງຄົມ. ນັ້ນແມ່ນພຽງຕົວຢ່າງທີ່ປະສົບຜົນເລັດ ຂອງໂຄງການໃນໄລຍະເລີ່ມຕົ້ນ, ທຄຕລ ຈະຍົກລະດັບ OneHeart ເພື່ອເປັນເວທີເປີດ ໃຫ້ສັງຄົມທີ່ສາມາດປະກອບສ່ວນໃຫ້ຊຸມຊົນທີ່ເຂັ້ມແຂງ ແລະ ຍືນຍົງໃນອະນາຄົດ.

ທັງ 03 ລາງວັນອັນຊິງກຽດທີ່ ທຄຕລ ໄດ້ຮັບໃນເທື່ອນີ້ ເປັນສິ່ງທີ່ຢັ້ງຢືນເຖິງຄຸນນະພາບໃນການບໍລິການ ແລະ ການຍອມຮັບທັງ ພາຍໃນ ແລະ ສາກົນຕໍ່ ທຄຕລ ໄດ້ເປັນຢ່າງດີ. ການສະເໜີຊື່ທະນາຄານເພື່ອເຂົ້າຮັບລາງວັນ ແລະ ການຕັດສິນ ແມ່ນພິຈາລະນາໂດຍ ຄະນະກຳມະການ ທີ່ມາຈາກບັນດາບໍລິສັດ ກວດສອບບັນຊີທີ່ມີຊື່ສຽງລະດັບສາກົນ ປະກອບດ້ວຍຕົວແທນຈາກ: ບໍລິສັດ Ernst & Young, Deloitte, KPMG ແລະ PwC. ບັນຍາກາດການຈັດງານໄດ້ຈັດຂຶ້ນໃນບັນຍາກາດທີ່ປິດຟິດຟື້ນ, ມີແຂກຜູ້ຊິງກຽດເຂົ້າຮ່ວມ ຫຼາຍກວ່າ 300 ທ່ານ ທີ່ມາຈາກ 200 ທະນາຄານ ແລະ ສະຖາບັນການເງິນ ຈາກ 40 ປະເທດ.



ລາງວັນດີເດັ່ນດ້ານແນວຄິດລິເລີ່ມ ເພື່ອການເຂົ້າເຖິງ ບໍລິການດ້ານການເງິນຢ່າງທົ່ວເຖິງ ແຫ່ງປີ
(Financial Inclusion initiative of the Year – Laos)



ລາງວັນດີເດັ່ນດ້ານແນວຄວາມຄິດລິເລີ່ມໃນການໃຫ້ ບໍລິການຜ່ານລະບົບ ມືຖື ແຫ່ງປີ
(Mobile Banking Initiative of the Year – Laos)



ລາງວັນດີເດັ່ນໂຄງການຮັບຜິດຊອບ ແລະ ຊ່ວຍເຫຼືອສັງຄົມ ດີເດັ່ນ - ຫຼຽນເງິນ ແຫ່ງປີ
(Corporate Social Responsibility Program of the year – Silver)